**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກໍາ ແລະ ການຄ້າ

ກົມການຄ້າຕ່າງປະເທດ

ເລກທີ 0408 /ກຄຕ

ນະຄອນຫຼວງວຽງຈັນ, ວັນທີ 24 ທັນວາ 2023

# ແຈ້ງການ

**ເຖິງ:** - ສະມາຄົມອຸດສາຫະກາຍານພາຫະນະລາວ

- ຜູ້ປະກອບການນຳເຂົ້າຍານພາຫະນະທາງບົກ ໃນຂອບເຂດທົ່ວປະເທດ

**ເລື່ອງ:** ເພີ່ມທະວີຄວາມເຂັ້ມງວດການນໍາເຂົ້າຍານພາຫະນະທາງບົກ.

- ອີງຕາມດໍາລັດ ວ່າດ້ວຍ ການຄຸ້ມຄອງທຸລະກິດຍານພາຫະນະທາງບົກ ສະບັບເລກທີ 470/ລບ, ລົງວັນທີ 27 ທັນວາ 2019;
- ອີງຕາມຄໍາສັ່ງ ວ່າດ້ວຍການຈັດຕັ້ງປະຕິບັດການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 10/ນຍ, ລົງວັນທີ 14 ກໍລະກົດ 2023;
- ອີງຕາມທິດຊີ້ນໍາ ຂອງ ທ່ານ ລັດຖະມົນຕີ ກະຊວງອຸດສາຫະກໍາ ແລະ ການຄ້າ ຄັ້ງວັນທີ 22 ພະຈິກ 2023.

ເພື່ອຮັບປະກັນການຄຸ້ມຄອງການນໍາເຂົ້າຍານພາຫະນະທາງບົກໃຫ້ຖືກຕ້ອງ ແລະ ສອດຄ່ອງກັບດໍາລັດ ວ່າດ້ວຍການຄຸ້ມຄອງທຸລະກິດຍານພາຫະນະທາງບົກ ແລະ ລະບຽບການອື່ນໆທີ່ກ່ຽວຂ້ອງ; ແນໃສ່ເພື່ອປ້ອງກັນການປອມແປງ, ຫຼົບຫຼີກການປະຕິບັດພັນທະອາກອນ ແລະ ປະກອບສ່ວນໃນການແກ້ໄຂບັນຫາຫຍຸ້ງຍາກດ້ານເສດຖະກິດ-ການເງິນໃຫ້ປະກົດຜົນເປັນຈິງ.

**ຫົວໜ້າກົມການຄ້າຕ່າງປະເທດ ອອກແຈ້ງການ ດັ່ງນີ້:**

1. ຜູ້ປະກອບການນໍາເຂົ້າຍານພາຫະນະທາງບົກໃນຂອບເຂດທົ່ວປະເທດ ຕ້ອງປະກອບເອກະສານເພື່ອຂໍອະນຸຍາດນໍາເຂົ້າຍານພາຫະນະເປັນອັນສະເພາະ ຊຶ່ງມີລາຍລະອຽດ ດັ່ງນີ້:
   1.1 ໃບທະບຽນວິສາຫະກິດ (ຄັ້ງທໍາອິດ ຫຼື ກໍລະນີທີ່ມີການປ່ຽນແປງຂໍ້ມູນ);
   1.2 ໃບອະນຸຍາດດໍາເນີນທຸລະກິດ (ຄັ້ງທໍາອິດ ຫຼື ກໍລະນີທີ່ມີການປ່ຽນແປງຂໍ້ມູນ);
   1.3 ໃບຢັ້ງຢືນການລົງທະບຽນຜູ້ນໍາເຂົ້າ-ສົ່ງອອກສິນຄ້າ (ຄັ້ງທໍາອິດ ຫຼື ກໍລະນີທີ່ມີການປ່ຽນແປງຂໍ້ມູນ);
   1.4 ໜັງສືຢັ້ງຢືນແຈ້ງລົງທະບຽນເພື່ອເປີດ ຫຼື ຫັນບັນຊີເງິນຝາກກ່ຽວກັບການນໍາເຂົ້າ-ສົ່ງອອກ ທີ່ອອກໃຫ້ໂດຍ ກົມຄຸ້ມຄອງເງິນຕາຕ່າງປະເທດ, ທະນາຄານແຫ່ງ ສປປ ລາວ;
   1.5 ໃບຢັ້ງຢືນເຂົ້າສູ່ລະບົບອາກອນມູນຄ່າເພີ່ມ (ຄັ້ງທໍາອິດ ຫຼື ກໍລະນີທີ່ມີການປ່ຽນແປງຂໍ້ມູນ);
   1.6 ໃບຢັ້ງຢືນການມອບອາກອນປະຈໍາປີຜ່ານມາ (ສໍາລັບວິສາຫະກິດທີ່ໄດ້ມີການເຄື່ອນໄຫວແລ້ວ);
   1.7 ໃບແຈ້ງລາຄາຂອງປະເທດຕົ້ນທາງ (Original Invoice);
   1.8 ໃບລາຍການຫຸ້ມຫໍ່ສິນຄ້າ (Packing List);
2. ຍານພາຫະນະທາງບົກທຸກຊະນິດທີ່ນໍາເຂົ້າມາ ສປປ ລາວ ອະນຸຍາດໃຫ້ນໍາເຂົ້າໄດ້ສະເພາະແຕ່ດ່ານພາສີສາກົນທີ່ມີຄູ່ດ່ານເປັນດ່ານສາກົນເຊັ່ນກັນເທົ່ານັ້ນ ແລະ ເປັນດ່ານພາສີສາກົນທີ່ມີລະບົບແຈ້ງພາສີເອເລັກໂຕຣນິກ ຕາມບັນຊີດ່ານທີ່ກະຊວງການເງິນໄດ້ກໍານົດອອກມາ.

3. ຍານພາຫະນະທາງບົກທີ່ນຳໃຊ້ແລ້ວ ຊຶ່ງນຳເຂົ້າເພື່ອມາຮັບໃຊ້ສະເພາະ (ກົນຈັກໜັກ) ແລະ ຮັບໃຊ້ໂຄງການ ແມ່ນສາມາດສືບຕໍ່ນຳໃຊ້ເອກະສານເປັນເຈ້ຍ ແລະ ຄັດຕິດເອກະສານທີ່ກຳນົດໄວ້ໃນຂໍ້ 1 ໃຫ້ຄົບຖ້ວນ ຈົນກວ່າຈະມີການປ່ຽນແປງ.

4. ການນຳເຂົ້າຍານພາຫະນະທາງບົກທຸກຊະນິດລວມທັງຍານພາຫະນະທີ່ນຳເຂົ້າຮັບໃຊ້ໂຄງການ, ສະຖານທູດ, ອົງການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ຕ້ອງດຳເນີນການນຳເຂົ້າໂດຍບໍລິສັດທີ່ໄດ້ຮັບອະນຸຍາດດຳເນີນກິດຈະການນຳເຂົ້າຍານພາຫະນະທາງບົກເທົ່ານັ້ນ ແລະ ນຳເຂົ້າຜ່ານດ່ານທີ່ໄດ້ລະບຸໄວ້ໃນຂໍ້ 2 ຂ້າງເທິງ, ສຳລັບຍານພາຫະນະ ຍີ່ຫໍ້ ແລະ ລຸ້ນ ທີ່ມີຕົວແທນຈຳໜ່າຍທາງການຢູ່ ສປປ ລາວ ຕ້ອງໄດ້ດຳເນີນການນຳເຂົ້າໂດຍຜ່ານຕົວແທນຈຳໜ່າຍຢ່າງເປັນທາງການ ໃນ ສປປ ລາວ ເທົ່ານັ້ນ. ກໍລະນີມີຄວາມຈຳເປັນຕ້ອງນຳເຂົ້າຜ່ານດ່ານອື່ນທີ່ບໍ່ສອດຄ່ອງຕາມຂໍ້ 2 ຂ້າງເທິງ ແມ່ນຕ້ອງໄດ້ສະເໜີຂໍການພິຈາລະນາອອກອະນຸຍາດຈາກກົມການຄ້າຕ່າງປະເທດ ເປັນແຕ່ລະກໍລະນີ.

5. ຍານພາຫະນະທາງບົກທີ່ຈະນຳເຂົ້າເພື່ອມາຈຳໜ່າຍ ຕ້ອງນຳເຂົ້າ ແລະ ຂົນສົ່ງດ້ວຍລົດຂົນສົ່ງ ຫຼື ເປັນຕູ້ຄອນເທັນເນີ້ເຂົ້າມາ ຍົກເວັ້ນລົດຫົວລາກ, ລົດບັນທຸກ, ລົດດ້າມ 10 ລໍ້ ຂຶ້ນໄປທີ່ບໍ່ສາມາດຂົນສົ່ງດ້ວຍລົດ ຫຼື ຕູ້ຄອນເທັນເນີ້.

6. ຍີ່ຫໍ້ ແລະ ລຸ້ນ ຂອງຍານພາຫະນະທາງບົກໃດທີ່ມີຕົວແທນຈຳໜ່າຍທາງການ ຢູ່ ສປປ ລາວ ແລ້ວ ບໍ່ອະນຸຍາດໃຫ້ບໍລິສັດນຳເຂົ້າຍານພາຫະນະທາງບົກອື່ນທີ່ບໍ່ໄດ້ເປັນຕົວແທນນຳເຂົ້າ. ສຳລັບ ຍີ່ຫໍ້ ແລະ/ຫຼື ລຸ້ນທີ່ຕົວແທນຈຳໜ່າຍທາງການຢູ່ ສປປ ລາວ ບໍ່ນຳເຂົ້າ, ຜູ້ນຳເຂົ້າຍານພາຫະນະທີ່ບໍ່ໄດ້ເປັນຕົວແທນທາງການສາມາດສະເໜີຂໍພິຈາລະນາອະນຸຍາດນຳເຂົ້າໄດ້ ແຕ່ຕ້ອງໄດ້ຮັບການກວດກາຈາກ ກົມການຄ້າຕ່າງປະເທດ ເສຍກ່ອນ ວ່າຍານພາຫະນະດັ່ງກ່າວບໍ່ທັນໄດ້ຜ່ານການຂຶ້ນທະບຽນນຳໃຊ້ກ່ອນການສົ່ງອອກ ແລະ ມີແຫຼ່ງທີ່ມາຈະແຈ້ງ.

7. ໃຫ້ ບໍລິສັດນຳເຂົ້າ ແລະ ສົ່ງອອກ ຍານພາຫະນະທາງບົກ ແຈ້ງຄືນ ① ຜູ້ສະໜອງຢູ່ຕ່າງປະເທດ ແລະ ຜູ້ຈຳໜ່າຍພາຍໃນຂອງຕົນ, ລວມທັງ ຍີ່ຫໍ້ ແລະ ລຸ້ນ ທີ່ຕົນໄດ້ຮັບມອບສິດນຳເຂົ້າ ເພື່ອມາຈຳໜ່າຍໃນ ສປປ ລາວ ແລະ ② ການປັບປຸງ/ປ່ຽນແປງ ຂໍ້ມູນການດຳເນີນກິດຈະການຂອງບໍລິສັດໃນໄລຍະຜ່ານມາ ແລະ ແຜນຕໍ່ໜ້າ, ໂດຍສະເພາະ ສະຖານທີ່ວາງຈຳໜ່າຍ ແລະ ບໍລິການຫຼັງການຂາຍໃຫ້ ກົມການຄ້າຕ່າງປະເທດ ກ່ອນວັນທີ 12 ມັງກອນ 2024 ເພື່ອສັງລວມ ເປັນຂໍ້ມູນຕິດຕາມ, ຄຸ້ມຄອງ ແລະ ກວດກາ ການນຳເຂົ້າ ແລະ ຈຳໜ່າຍ.

8. ໃຫ້ ບໍລິສັດນຳເຂົ້າ ແລະ ສົ່ງອອກ ຍານພາຫະນະທາງບົກ ທີ່ບໍ່ແມ່ນຕົວແທນຈຳໜ່າຍທາງການ ສັງລວມຈຳນວນ ແລະ ປະກອບເອກະສານຢັ້ງຢືນການສັ່ງຊື້ ແລະ ວາງມັດຈຳສັ່ງຈອງ/ຊຳລະຍານພາຫະນະທາງບົກຜ່ານບັນຊີສະເພາະຊຳລະສະສາງຕ່າງປະເທດຂອງບໍລິສັດ ໃຫ້ ກົມການຄ້າຕ່າງປະເທດ ກ່ອນວັນທີ 12 ມັງກອນ 2023 ເພື່ອແກ້ໄຂເປັນງວດສຸດທ້າຍ, ຫຼັງຈາກນັ້ນ ແມ່ນໃຫ້ປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດ.

9. ແຈ້ງການສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ ແລະ ເລີ່ມຈັດຕັ້ງປະຕິບັດແຕ່ວັນທີ 01 ມັງກອນ 2024 ເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

**ເຊັນແທນຫົວໜ້າກົມ**

**ຮອງຫົວໜ້າກົມ**

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການຄ້າຕ່າງປະເທດ

ວ່າງໃຈ ວ່າງ

ນຳສົ່ງ:

- ກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ
- ກົມພາສີ, ກະຊວງການເງິນ